# ALIEITROBPA

**Generic name:** Eltrombopag Olamine tablets
**Brand Name:** ALIEITROBPA
**Composition:**
Eltrombopag Olamine............................................25mg
**Indications:**
- ALIEITROBPA is indicated for the treatment of thrombocytopenia in adult and pediatric patients 1 year and older with persistent or chronic immune thrombocytopenia (ITP) who have had an insufficient response to corticosteroids, immunoglobulins, or splenectomy.
- Treatment of thrombocytopenia in patients with hepatitis C infection.
- In combination with standard immunosuppressive therapy for the first line treatment of adult and pediatric patients 2 years and older with severe aplastic anemia.

**Dosage:**
- Take ALIEITROBPA without a meal or with a meal low in calcium (≤ 50 mg).
- Persistent or Chronic ITP: Initiate ALIEITROBPA at 50 mg once daily for most adult and pediatric patients 6 years and older, and at 25 mg once daily for pediatric patients aged 1 to 5 years.
- Chronic Hepatitis C-associated Thrombocytopenia: Initiate ALIEITROBPA at 25 mg once daily for all patients. Do not exceed a daily dose of 100 mg.
- First-line Severe Aplastic Anemia: Initiate ALIEITROBPA once daily at 2.5 mg/kg (in pediatric patients aged 2 to 5 years old), 75 mg (pediatric patients aged 6 to 11 years old), or 150 mg for patients aged 12 years and older.
- Refractory Severe Aplastic Anemia: Initiate ALIEITROBPA at 50 mg once daily.

**Contraindications:**
- None.

**Warnings:**
- Hepatotoxicity: Monitor liver function before and during therapy.
- Increased Risk of Death and Progression of Myelodysplastic Syndromes to Acute Myeloid Leukemia.
- Thrombotic/Thromboembolic Complications: Monitor platelet counts regularly.

**Adverse Effects:**
- Anemia, nausea, pyrexia, alanine aminotransferase increases, cough, fatigue, headache, and diarrhea.

**Dosage form:** Orange tablets.
**Packaging:** 28 tablets/bottle.
**Expiry date:** 36 months from the date of manufacture.
**Storage:**
- Store sealed in original packaging below 30℃.
- Keep out of reach of children.

**Manufactured by:**
Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# ALIEITROBPA

**ຊື່ທົ່ວໄປ:** Eltrombopag Olamine tablets
**ຊື່ການຄ້າ:** ALIEITROBPA
**ສ່ວນປະກອບ:**
Eltrombopag Olamine........................................25 mg
**ຂໍ້ບົ່ງໃຊ້:**
- ALIEITROBPA ໃຊ້ສຳລັບປິ່ນປົວພະຍາດທີ່ມີພາວະເມັດເລືອດຕ່ຳ, ໃນຜູ້ໃຫຍ່ ແລະ ເດັກນ້ອຍ ອາຍຸ 01 ປີຂຶ້ນໄປ, ມີສາເຫດມາຈາກພູມຄຸ້ມກັນບົກຜ່ອງ ເຮັດໃຫ້ເມັດເລືອດຕ່ຳ (chronic immune thrombocytopenia (ITP)) ຊຳເຮື້ອ ຫຼື ເປັນໃນໄລຍະຕໍ່ເນື່ອງກັນ ເຊິ່ງບໍ່ມີການຕອບສະໜອງພຽງພໍ ເມື່ອມີການນຳໃຊ້ຢາໃນກຸ່ມສະເຕຣອຍ (corticosteroids), (immunoglobulins) ຫຼື ໃນກໍລະນີມີການຜ່າຕັດມ້າມ.
- ການປິ່ນປົວພາວະເມັດເລືອດຕ່ຳ ໃນຄົນເຈັບທີ່ມີການຕິດເຊື້ອພະຍາດໄວຣັສຕັບອັກເສບ ຊະນິດ ຊີ.
- ນຳໃຊ້ຮ່ວມກັບການບຳບັດດ້ວຍຢາທີ່ກົດໜ່ວງພູມຄຸ້ມກັນມາດຖານ ສຳລັບການປິ່ນປົວເບື້ອງຕົ້ນໃນຄົນເຈັບຜູ້ໃຫຍ່ ແລະ ເດັກນ້ອຍອາຍຸ 02 ປີຂຶ້ນໄປ ທີ່ມີພາວະເລືອດຈາງ ແລະ ພູມຄຸ້ມກັນບົກຜ່ອງຢ່າງຮຸນແຮງ.

**ວິທີໃຊ້:**
- ປະລິມານທີ່ນຳໃຊ້ ≤ 50 mg ກິນກ່ອນ ຫຼື ຫຼັງອາຫານ ຫຼື ໃຫ້ກິນພ້ອມກັບອາຫານທີ່ມີທາດແຄວຊຽມຕ່ຳ.
- ໃນກໍລະນີພູມຄຸ້ມກັນບົກຜ່ອງ ເຮັດໃຫ້ເມັດເລືອດຕ່ຳຊຳເຮື້ອ ຫຼື ຕໍ່ເນື່ອງ (immune thrombocytopenia (ITP)) ນຳໃຊ້ ALIEITROBPA ດ້ວຍປະລິມານ 50 mg, 1 ເທື່ອຕໍ່ມື້ ສຳລັບຄົນເຈັບຜູ້ໃຫຍ່ ແລະ ເດັກນ້ອຍທີ່ມີອາຍຸ 06 ປີຂຶ້ນໄປ ແລະ ໃຊ້ດ້ວຍປະລິມານ 25 mg, 1 ເທື່ອຕໍ່ມື້ ສຳລັບຄົນເຈັບທີ່ເປັນເດັກນ້ອຍທີ່ມີອາຍຸ 01 ຫາ 05 ປີ.
- ໃຊ້ສຳລັບຄົນເຈັບພະຍາດໄວຣັສຕັບອັກເສບ ຊະນິດ ຊີ ທີ່ມີພາວະເມັດເລືອດຕ່ຳ, ໃຫ້ເລີ່ມນຳໃຊ້ ALIEITROBPA 25 mg 1 ເທື່ອຕໍ່ມື້ ໃນທຸກກໍລະນີ, ຫ້າມໃຊ້ເກີນ 100 mg ຕໍ່ມື້.
- ໃຊ້ສຳລັບຄົນເຈັບພະຍາດເລືອດຈາງ ໃຫ້ເລີ່ມໃຊ້ 2.5 mg/kg ນ້ຳໜັກຕົວຮ່າງກາຍ( ສຳລັບເດັກອາຍຸ 2-5 ປີ), ນຳໃຊ້ດ້ວຍປະລິມານ 75 mg ( ສຳລັບເດັກອາຍຸ 6-11 ປີ), ຫຼື ນຳໃຊ້ດ້ວຍປະລິມານ 150 mg ສຳລັບຄົນເຈັບ 12 ປີຂຶ້ນໄປ.
- ໃຊ້ສຳລັບຄົນເຈັບພະຍາດເລືອດຈາງທີ່ມີອາການດື້ຕໍ່ຢາ ໃຫ້ເລີ່ມໃຊ້ ALIEITROBPA 50 mg 1 ເທື່ອຕໍ່ມື້.

**ຂໍ້ຫ້າມໃຊ້:**
- ຍັງບໍ່ທັນມີຂໍ້ມູນ

**ຄຳເຕືອນ:**
- ຄວາມເປັນພິດຕໍ່ຕັບ: ຄວນວິເຄາະ ແລະ ປະເມີນໜ້າທີ່ການທຳງານຂອງຕັບໃນໄລຍະກ່ອນ ແລະ ໃນລະຫວ່າງການປິ່ນປົວດ້ວຍຢາ.
- ມີຄວາມສ່ຽງຕໍ່ການເສຍຊີວິດ ແລະ ໃນການພັດທະນາການຈະເລີນເຕີບໂຕຂອງເຊື້ອພະຍາດ Myelodysplastic Syndromes ຂອງຄົນເຈັບໂດຍສາມາດພາໃຫ້ເກີດເປັນພະຍາດ ມະເຮັງເມັດເລືອດຂາວກະທັນຫັນ.
- ເກີດອາການແຊກຊ້ອນຈາກອາການທີ່ມີລີ່ມເລືອດອຸດຕັນ: ຄວນວິເຄາະ ແລະ ປະເມີນຄ່າຂອງເລືອດເປັນປະຈຳ.

**ຜົນຂ້າງຄຽງ:**
- ມີພາວະເລືອດຈາງ, ປວດຮາກ, ມີໄຂ້, ຄ່າຂອງ alanine aminotransferase ເພີ່ມຂຶ້ນ, ໄອ, ອ່ອນເພຍ, ເຈັບຫົວ ແລະ ຖອກທ້ອງ.

**ຮູບແບບຂອງຢາ:** ຢາເມັດສີສົ້ມ.
**ຂະໜາດບັນຈຸ:** ບັນຈຸໃນກ່ອງ, 1 ກ່ອງມີ 28 ເມັດ.
**ວັນໝົດອາຍຸ:** 36 ເດືອນນັບຫຼັງຈາກວັນທີຜະລິດ.
**ການເກັບຮັກສາ:**
- ເກັບຮັກສາໄວ້ໃນກ່ອງບັນຈຸເດີມ, ປິດຝາສະໜິດ, ເກັບຮັກສາໄວ້ໃນອຸນຫະພູມຕ່ຳກວ່າ 30°C.
- ເກັບຮັກສາໄວ້ໃຫ້ຫ່າງໄກຈາກມືເດັກ.

**ຜະລິດໂດຍ:**
ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com